**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 903 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 30 ມັງກອນ 2020

# ຂໍ້ຕົກລົງ (ສະບັບປັບປຸງ)

# ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ

- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ, ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມດຳລັດ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມແຈ້ງການ ຂອງຫ້ອງວ່າການລັດຖະບານ ວ່າດ້ວຍການອະນຸມັດອອກຂໍ້ບັງຄັບຂຶ້ນທະບຽນຜູ້ຊົມໃຊ້ເລກໝາຍໂທລະສັບທົ່ວປະເທດ, ສະບັບເລກທີ 366/ສນຍ, ລົງວັນທີ 06 ກັນຍາ 2011.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການກ່ຽວກັບ ການຄຸ້ມຄອງ, ຕິດຕາມກວດກາ ຜູ້ໃຊ້ບໍລິການ, ຜູ້ໃຫ້ບໍລິການ ແລະ ຜູ້ຈຳໜ່າຍ ເລກໝາຍໂທລະສັບ ເພື່ອເຮັດໃຫ້ການຂຶ້ນທະບຽນເລກໝາຍໂທລະສັບ ເຂົ້າໃນລະບົບຖານຂໍ້ມູນ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ແນໃສ່ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພຂອງສັງຄົມ ແລະ ຮອງຮັບການນຳໃຊ້ເຂົ້າກັບລະບົບເຕັກໂນໂລຊີໃໝ່.

### ມາດຕາ 2 ການຂຶ້ນທະບຽນເລກໝາຍໂທລະສັບ

ການຂຶ້ນທະບຽນເລກໝາຍໂທລະສັບ ແມ່ນການບັນທຶກຂໍ້ມູນຂອງຜູ້ໃຊ້ບໍລິການ ເລກໝາຍໂທລະສັບ ທີ່ເປັນແບບລາຍເດືອນ, ແບບຕື່ມເງິນ, ໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ ແລະ ເລກໝາຍທີ່ນຳໃຊ້ໃນອຸປະກອນສື່ສານອື່ນໆ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ເລກໝາຍໂທລະສັບ** ໝາຍເຖິງ ຕົວເລກທີ່ມີຄວາມໝາຍບົ່ງບອກເຖິງ ລະຫັດປະເທດ, ລະຫັດແຂວງ, ລະຫັດເຄືອຂ່າຍໂທລະຄົມມະນາຄົມ ແລະ ເລກໝາຍຂອງຜູ້ໃຊ້ບໍລິການ;

2. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ການບໍລິການໂທລະຄົມມະນາຄົມທຸກລະບົບ ທີ່ມີອາຍຸ 15 ປີຂຶ້ນໄປ ທີ່ມີສິດຖືບັດປະຈຳຕົວປະຊາຊົນລາວ;
3. **ຜູ້ໃຫ້ບໍລິການ** ໝາຍເຖິງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ໄດ້ຮັບອະນຸຍາດປະກອບກິດຈະການໂທລະຄົມມະນາຄົມ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4. **ສາຂາຂອງຜູ້ໃຫ້ບໍລິການ** ໝາຍເຖິງ ຫ້ອງການ ຫຼື ປ້ອງບໍລິການ ທີ່ໄດ້ຮັບສິດ ແລະ ພັນທະ ຈາກຜູ້ໃຫ້ບໍລິການ ແລະ ຂະແໜງ ໄປສະນີ, ໂທລະຄົມມະນາຄົມ ແຂວງ/ນະຄອນຫຼວງ;
5. **ຕົວແທນຈຳໜ່າຍ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃນການຈຳໜ່າຍເລກໝາຍໂທລະສັບ;
6. **ຂໍ້ມູນການຂຶ້ນທະບຽນ** ໝາຍເຖິງ ຂໍ້ມູນສ່ວນບຸກຄົນ, ນິຕິບຸກຄົນ ຂອງຜູ້ນຳໃຊ້ ເລກໝາຍໂທລະສັບປະກອບມີ: ຊື່, ນາມສະກຸນ, ວັນເດືອນປີເກີດ, ທີ່ຢູ່, ຮູບຖ່າຍຕົວຈິງ, ເລກໝາຍໂທລະສັບ, ປະເພດບໍລິການ, ສຳເນົາເອກະສານໃດໜຶ່ງເຊັ່ນ: ບັດປະຈຳຕົວ, ສຳມະໂນຄົວ, ໜັງສືຜ່ານແດນ ແລະ ຂໍ້ມູນອື່ນໆຕາມການກຳນົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
7. **ລະບົບຂຶ້ນທະບຽນເລກໝາຍໂທລະສັບ** ໝາຍເຖິງ ເຄື່ອງມືອຸປະກອນ ສຳລັບການຂຶ້ນທະບຽນທີ່ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໄວ້ ເປັນຕົ້ນ ຄອມພິວເຕີ, ໂທລະສັບ, ສະມາດໂຟນ ຫຼື ອຸປະກອນ ຮາດແວອື່ນໆ ແລະ ໂປແກຣມ ທີ່ພັດທະນາຂຶ້ນ ເພື່ອການຂຶ້ນທະບຽນ ແລະ ການບັນທຶກຂໍ້ມູນການຂຶ້ນທະບຽນ ເປັນຕົ້ນ ແອບພຣິເຄຊັນ ແລະ ຊອບແວ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ນຳໃຊ້ເລກໝາຍໂທລະສັບ ຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ແລະ ນຳໄປໃຊ້ໃນລະບົບຂ້າມແດນ.

## ໝວດທີ 2
## ການຂຶ້ນທະບຽນ

### ມາດຕາ 5 ການຂຶ້ນທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ເລກໝາຍໂທລະສັບຂອງ ສປປ ລາວ ຕ້ອງໄດ້ຂຶ້ນທະບຽນ ແລະ ປະກອບເອກະສານໃຫ້ຖືກຕ້ອງ, ຄົບຖ້ວນ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ການຂຶ້ນທະບຽນຕ້ອງຮັບປະກັນ ບໍ່ກໍ່ໃຫ້ເກີດລາຍຈ່າຍເພີ່ມຕື່ມໃດໆ ໃຫ້ຜູ້ໃຊ້ບໍລິການເລກໝາຍໂທລະສັບ ແລະ ປະຕິບັດຕາມຂັ້ນຕອນການຂຶ້ນທະບຽນ ໂດຍນຳໃຊ້ລະບົບຂຶ້ນທະບຽນເລກໝາຍໂທລະສັບ ທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໄວ້ໃນລະບຽບການສະເພາະ.

ບຸກຄົນທີ່ມີອາຍຸຕ່ຳກວ່າ 15 ປີ ຜູ້ປົກຄອງຕ້ອງ ເປັນຜູ້ຂຶ້ນທະບຽນເລກໝາຍໂທລະສັບໃຫ້ນຳໃຊ້;

**ມາດຕາ 6 ສະຖານທີ່ຂຶ້ນທະບຽນ**

ບຸກຄົນສາມາດຂຶ້ນທະບຽນຢູ່ສະຖານທີ່ມີສະພາບແວດລ້ອມເໝາະສົມໃດໜຶ່ງຂອງຜູ້ໃຫ້ບໍລິການເຊັ່ນ: ສຳນັກງານໃຫຍ່, ຫ້ອງການສາຂາຂອງຜູ້ໃຫ້ບໍລິການ ແລະ ຕົວແທນຈຳໜ່າຍຂອງຕົນ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ສາມາດຂຶ້ນທະບຽນຢູ່ທີ່ ສຳນັກງານໃຫຍ່ ຫຼື ສາຂາຂອງຜູ້ໃຫ້ບໍລິການເທົ່ານັ້ນ.

**ມາດຕາ 7 ຈຳນວນການຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດຂຶ້ນທະບຽນໄດ້ໃນຈຳນວນດັ່ງນີ້:

1. ບຸກຄົນ ໃດໜຶ່ງ ບໍ່ເກີນ 05 ເລກໝາຍ;
2. ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ບໍ່ເກີນ 50 ເລກໝາຍ, ກໍລະນີ ຂຶ້ນທະບຽນເລກໝາຍໂທລະສັບໃຫ້ບຸກຄົນໃນອົງການຈັດຕັ້ງຕົນນຳໃຊ້ ແລະ ບໍ່ເກີນ 100 ເລກໝາຍ, ກໍລະນີ ຂຶ້ນທະບຽນເລກໝາຍໂທລະສັບ ເພື່ອນຳໃຊ້ໃນອຸປະກອນ ຂອງອົງການຈັດຕັ້ງຕົນ;

ກໍລະນີ ຕ້ອງການເພີ່ມຈຳນວນ ນອກເໜືອທີ່ກຳນົດໄວ້ ຕ້ອງສະເໜີຕໍ່ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອພິຈາລະນາ.

**ມາດຕາ 8 ເອກະສານການຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຕ້ອງປະກອບເອກະສານທີ່ມີຂໍ້ມູນຊັດເຈນ ດັ່ງນີ້:

1. ກໍລະນີ ບຸກຄົນ ຕ້ອງປະກອບເອກະສານໃດໜຶ່ງ ດັ່ງລຸ່ມນີ້:
   - ບັດປະຈຳຕົວທີ່ມີອາຍຸນຳໃຊ້ໄດ້;
   - ປຶ້ມສຳມະໂນຄົວ;
   - ໜັງສືຜ່ານແດນທີ່ມີອາຍຸນຳໃຊ້ໄດ້ (ທັງຄົນລາວ ແລະ ຄົນຕ່າງປະເທດ).
2. ກໍລະນີ ນິຕິບຸກຄົນ ຕ້ອງປະກອບເອກະສານໃດໜຶ່ງ ດັ່ງລຸ່ມນີ້:
   - ໜັງສືມອບສິດຂຶ້ນທະບຽນເລກໝາຍໂທລະສັບຈາກ ຜູ້ອຳນວຍການບໍລິສັດ;
   - ສຳເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ;
   - ແຈ້ງລາຍການເລກໝາຍໂທລະສັບ ພ້ອມຂໍ້ມູນຂອງຜູ້ທີ່ຈະນຳໃຊ້ຄົບຖ້ວນ ປະກອບມີ: ຊື່ ແລະ ນາມສະກຸນ, ວັນເດືອນປີເກີດ, ທີ່ຢູ່, ຮູບຖ່າຍຕົວຈິງ ກໍລະນີ ຂຶ້ນທະບຽນເລກໝາຍໂທລະສັບ ເພື່ອໃຫ້ບຸກຄົນໃນບໍລິສັດຂອງຕົນນຳໃຊ້ ຫຼື ປະເພດລາຍການອຸປະກອນ ກໍລະນີຂຶ້ນທະບຽນເລກໝາຍໂທລະສັບ ເພື່ອໄປນຳໃຊ້ອຸປະກອນຂອງບໍລິສັດຕົນ;
   - ເອກະສານໃດໜຶ່ງຂອງອຳນວຍການບໍລິສັດທີ່ມອບສິດຂຶ້ນທະບຽນເລກໝາຍໂທລະສັບເຊັ່ນ: ບັດປະຈຳຕົວ, ສຳມະໂນຄົວ, ໜັງສືຜ່ານແດນ ພ້ອມຮູບຖ່າຍຜູ້ອຳນວຍການ ຂະໜາດ 3x4;
   - ເອກະສານອື່ນຕາມການກຳນົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
3. ກໍລະນີ ອົງການຈັດຕັ້ງ ຕ້ອງປະກອບເອກະສານໃດໜຶ່ງ ດັ່ງລຸ່ມນີ້:

- ໜັງສືສະເໜີເປັນທາງການ ຈາກອົງການຈັດຕັ້ງ;
- ແຈ້ງລາຍການເລກໝາຍໂທລະສັບ ພ້ອມຂໍ້ມູນຂອງຜູ້ທີ່ຈະນຳໃຊ້ຄົບຖ້ວນ ປະກອບມີ: ຊື່ ແລະ ນາມສະກຸນ, ວັນເດືອນປີເກີດ, ທີ່ຢູ່, ຮູບຖ່າຍຕົວຈິງ ກໍລະນີຂຶ້ນທະບຽນ ເພື່ອໃຫ້ບຸກຄົນໃນອົງການຈັດຕັ້ງຂອງຕົນນຳໃຊ້ ຫຼື ປະເພດລາຍການອຸປະກອນ ກໍລະນີຂຶ້ນທະບຽນ ເພື່ອໄປນຳໃຊ້ອຸປະກອນຂອງອົງການຈັດຕັ້ງ;
- ເອກະສານໃດໜຶ່ງຂອງຫົວໜ້າອົງການຈັດຕັ້ງທີ່ມອບສິດຂຶ້ນທະບຽນເລກໝາຍໂທລະສັບເຊັ່ນ: ບັດປະຈຳຕົວ, ສຳມະໂນຄົວ, ໜັງສືຜ່ານແດນ, ພ້ອມຮູບຖ່າຍຫົວໜ້າອົງການຈັດຕັ້ງ ຂະໜາດ 3x4;
- ເອກະສານອື່ນຕາມການກຳນົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ໃນເວລາມາຂຶ້ນທະບຽນທັງ 03 ກໍລະນີ ຂ້າງເທິງໃຫ້ຖືເອກະສານສະບັບແທ້ມາເພື່ອຢັ້ງຢືນເທົ່ານັ້ນ ແລະ ໃຫ້ເອົາກັບຄືນສະເພາະເອກະສານທີ່ຕ້ອງສະໜອງເປັນສຳເນົາ.

## ໝວດທີ 3
## ການອະນຸຍາດ ຕົວແທນຈຳໜ່າຍ

**ມາດຕາ 9 ຜູ້ຈຳໜ່າຍເລກໝາຍໂທລະສັບ**

ຜູ້ຈຳໜ່າຍເລກໝາຍໂທລະສັບ ແມ່ນຜູ້ຂາຍເລກໝາຍໂທລະສັບໃຫ້ຜູ້ໃຊ້ບໍລິການ, ປະກອບມີ 03 ປະເພດ ດັ່ງນີ້:

1. ຜູ້ໃຫ້ບໍລິການ;
2. ສາຂາຂອງຜູ້ໃຫ້ບໍລິການ;
3. ຕົວແທນຈຳໜ່າຍ.

**ມາດຕາ 10 ຫຼັກການອະນຸຍາດເປັນຕົວແທນຈຳໜ່າຍ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງ ເປັນຕົວແທນຈຳໜ່າຍເລກໝາຍໂທລະສັບ ຕ້ອງປະຕິບັດຕາມ ຫຼັກການ ດັ່ງນີ້:

1. ເຮັດສັນຍາຈຳໜ່າຍເລກໝາຍໂທລະສັບ ກັບ ຜູ້ໃຫ້ບໍລິການ ຫຼື ສາຂາຂອງຜູ້ໃຫ້ບໍລິການທີ່ຕົນຕ້ອງການເປັນຕົວແທນຈຳໜ່າຍ;
2. ສະເໜີຂໍອະນຸຍາດຈາກຂະແໜງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ.

**ມາດຕາ 11 ເງື່ອນໄຂການພິຈາລະນາອອກອະນຸຍາດເປັນຕົວແທນຈຳໜ່າຍ**

ຂະແໜງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຈະພິຈາລະນາອອກອະນຸຍາດເປັນຕົວແທນຈຳໜ່າຍ ຕາມເງື່ອນໄຂດັ່ງນີ້:

1. ມີໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດຈາກ ຂະແໜງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ມີສັນຍາຈຳໜ່າຍເລກໝາຍໂທລະສັບ ກັບ ຜູ້ໃຫ້ບໍລິການ ຫຼື ສາຂາຂອງຜູ້ໃຫ້ບໍລິການ;
3. ມີສະຖານທີ່ຢູ່ຖາວອນຢູ່ ສປປ ລາວ;
4. ມີອຸປະກອນການຂຶ້ນທະບຽນ ທີ່ສາມາດເຊື່ອມຕໍ່ອິນເຕີເນັດ;

5. ມີໃບຢັ້ງຢືນການຝຶກອົບຮົມ ກ່ຽວກັບ ຂັ້ນຕອນ, ວິທີການຂຶ້ນທະບຽນເລກໝາຍໂທລະສັບ ຈາກ ຜູ້ໃຫ້ບໍລິການ ຫຼື ສາຂາຂອງຜູ້ໃຫ້ບໍລິການ.

## ໝວດທີ 4

## ການເກັບຮັກສາຂໍ້ມູນ, ວິທີກວດຜົນ ການຂຶ້ນທະບຽນ ແລະ ການລາຍງານ

### ມາດຕາ 12 ການເກັບຮັກສາຂໍ້ມູນການຂຶ້ນທະບຽນ

ຜູ້ຄຸ້ມຄອງຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ແລະ ຜູ້ໃຫ້ບໍລິການ ຕ້ອງຮັບປະກັນການເກັບຮັກສາຖານຂໍ້ມູນ ຂອງ ລະບົບຂຶ້ນທະບຽນເລກໝາຍໂທລະສັບໃຫ້ມີຄວາມປອດໄພ ແລະ ປິດລັບ.

### ມາດຕາ 13 ການສະໜອງຂໍ້ມູນການຂຶ້ນທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຕ້ອງການຮູ້ຂໍ້ມູນລະອຽດການຂຶ້ນທະບຽນເລກໝາຍໂທລະສັບ ຫຼື ຂໍ້ມູນການນຳໃຊ້ບໍລິການ ຂອງຕົນ ຕ້ອງເຮັດໜັງສືສະເໜີ ຫາ ຜູ້ໃຫ້ບໍລິການ;

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຕ້ອງການຮູ້ ຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ຫຼື ຂໍ້ມູນການນຳໃຊ້ບໍລິການຂອງຜູ້ອື່ນ ຕ້ອງເຮັດໜັງສືສະເໜີຫາພາກສ່ວນທີ່ກ່ຽວຂ້ອງ ແລະ ສະເໜີຫາຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

### ມາດຕາ 14 ວິທີກວດຜົນຢັ້ງຢືນການຂຶ້ນທະບຽນສຳເລັດ

ຜູ້ໃຫ້ບໍລິການ ຕ້ອງສ້າງ ແລະ ແນະນຳ ວິທີກວດຜົນການຂຶ້ນທະບຽນດ້ວຍຕົນເອງ ໃຫ້ແກ່ຜູ້ໃຊ້ບໍລິການ ໂດຍຜ່ານລະຫັດໃດໜຶ່ງ, ຜ່ານທາງຂໍ້ຄວາມສັ້ນ ຫຼື ວິທີການໃດໜຶ່ງທີ່ເອກະພາບກັນ ຕາມການກຳນົດ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ສຳລັບການແຈ້ງຂໍ້ມູນຂຶ້ນທະບຽນຜູ້ໃຊ້ບໍລິການສຳເລັດຜ່ານແຕ່ລະ ລະບົບຂ້າງເທິງ ຜູ້ໃຫ້ບໍລິການຕ້ອງຮັບປະກັນຄວາມລັບຂໍ້ມູນຂອງຜູ້ໃຊ້ບໍລິການຕາມລະບຽບກົດໝາຍ.

### ມາດຕາ 15 ການລາຍງານ

ຜູ້ໃຫ້ບໍລິການ ຕ້ອງສົ່ງບົດສະຫຼຸບລາຍງານຜົນການຂຶ້ນທະບຽນ ແລະ ການນຳໃຊ້ເລກໝາຍໂທລະສັບເປັນທາງການ ປະຈຳອາທິດ, ເດືອນ, ປີ ໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 5

## ສິດ ແລະ ພັນທະ

### ມາດຕາ 16 ສິດຂອງຜູ້ໃຫ້ບໍລິການ ແລະ ສາຂາຂອງຜູ້ໃຫ້ບໍລິການ

ຜູ້ໃຫ້ບໍລິການ ແລະ ສາຂາຂອງຜູ້ໃຫ້ບໍລິການ ມີສິດ ດັ່ງນີ້:

1. ຄັດເລືອກ ແລະ ເຮັດສັນຍາກັບຕົວແທນຈຳໜ່າຍ;
2. ປິດການນຳໃຊ້ເລກໝາຍໂທລະສັບ ສຳລັບຜູ້ທີ່ບໍ່ຂຶ້ນທະບຽນ ແລະ ຜູ້ຂຶ້ນທະບຽນແລ້ວແຕ່ບໍ່ໄດ້ເຄື່ອນໄຫວໃນໄລຍະເວລາ 03 ເດືອນ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ຈຳໜ່າຍເລກໝາຍໂທລະສັບຂອງຕົນໃນ ສປປ ລາວ;
4. ທວງຖາມຂໍ້ມູນເພີ່ມຕື່ມ ໃນກໍລະນີ ຂໍ້ມູນ ຫຼື ເອກະສານປະກອບບໍ່ຖືກຕ້ອງ ຫຼື ບໍ່ຊັດເຈນ.

5. ຂຶ້ນທະບຽນຢູ່ສະຖານທີ່ໄດ້ຮັບອະນຸຍາດ ໂດຍປະຕິບັດການຂຶ້ນທະບຽນ ຕາມຂໍ້ຕົກລົງສະບັບນີ້;

6. ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດຂອງຕົວແທນຈຳໜ່າຍ**

ຕົວແທນຈຳໜ່າຍມີສິດ ດັ່ງນີ້:

1. ຈຳໜ່າຍເລກໝາຍໂທລະສັບ ຂອງຜູ້ໃຫ້ບໍລິການ ໃນ ສປປ ລາວ;
2. ທວງຖາມຂໍ້ມູນເພີ່ມຕື່ມ ໃນກໍລະນີ ຂໍ້ມູນ ຫຼື ເອກະສານປະກອບບໍ່ຖືກຕ້ອງ ຫຼື ບໍ່ຊັດເຈນ;
3. ຂຶ້ນທະບຽນຢູ່ສະຖານທີ່ ໄດ້ຮັບອະນຸຍາດໂດຍປະຕິບັດການຂຶ້ນທະບຽນຕາມຂໍ້ຕົກລົງສະບັບນີ້;
4. ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການມີສິດ ດັ່ງນີ້:

1. ໄດ້ຮັບການສະໜອງບໍລິການ ຢ່າງມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ຍຸຕິທຳ;
2. ສະເໜີປ່ຽນແປງຂໍ້ມູນຂຶ້ນທະບຽນເລກໝາຍໂທລະສັບ ຂອງຕົນຕາມລະບຽບການ;
3. ໂອນເລກໝາຍໂທລະສັບຂອງຕົນໃຫ້ຜູ້ອື່ນນຳໃຊ້ ແລະ ຕ້ອງໃຫ້ຜູ້ໃຊ້ບໍລິການໃໝ່ຂຶ້ນທະບຽນເລກໝາຍໂທລະສັບ ຕາມລະບຽບການ ແລະ ຂັ້ນຕອນ ຂອງຂໍ້ຕົກລົງສະບັບນີ້;
4. ຮ້ອງຂໍນຳໃຊ້ເລກໝາຍໂທລະສັບ ຂອງຕົນທີ່ນຳໃຊ້ເປັນປົກກະຕິ ແລະ ໄດ້ຂຶ້ນທະບຽນຖືກຕ້ອງ ຄືນໃໝ່ ກໍລະນີຖືກປິດການນຳໃຊ້ ໂດຍບໍ່ໄດ້ຮັບການແຈ້ງເຫດຜົນ;
5. ຂໍຢຸດການນຳໃຊ້ເລກໝາຍໂທລະສັບຂອງຕົນ ຕາມລະບຽບການຂອງຜູ້ໃຫ້ບໍລິການ ທີ່ຕົນນຳໃຊ້;
6. ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ພັນທະຂອງຜູ້ໃຫ້ບໍລິການ ແລະ ສາຂາຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການ ແລະ ສາຂາຂອງຜູ້ໃຫ້ບໍລິການ ມີພັນທະດັ່ງນີ້:

1. ຂຶ້ນທະບຽນເລກໝາຍໂທລະສັບຂອງ ຜູ້ໃຊ້ບໍລິການໃນເຄືອຂ່າຍຂອງຕົນ;
2. ຮັບຜິດຊອບຄວາມຖືກຕ້ອງ, ຄົບຖ້ວນ ແລະ ປິດລັບຕໍ່ ຂໍ້ມູນຂຶ້ນທະບຽນ ຂອງຜູ້ໃຊ້ບໍລິການ;
3. ປະກອບສ່ວນ ບຳລຸງຮັກສາ ເຄື່ອງມືການຂຶ້ນທະບຽນ;
4. ຮັບປະກັນຄວາມປອດໄພ, ການເຊື່ອມຕໍ່ ແລະ ການນຳໃຊ້ຢ່າງມີປະສິດທິພາບ;
5. ສຳເນົາຂໍ້ມູນການຂຶ້ນທະບຽນໃນຮູບແບບ ເອເລັກໂຕຣນິກ;
6. ຝຶກອົບຮົມ, ແນະນຳສາຂາ ຫຼື ຕົວແທນຈຳໜ່າຍ ຂອງເຄືອຂ່າຍຕົນ ໃຫ້ຮູ້ວິທີການຂຶ້ນທະບຽນແບບ ເອເລັກໂຕນິກ;
7. ໂຄສະນາ, ເຜີຍແຜ່ ຊຸກຍູ້ ແລະ ສົ່ງເສີມ ວຽກງານການຂຶ້ນທະບຽນ;
8. ຕ້ອງຮັກສາເລກໝາຍທີ່ຖືກປິດ ໃນກໍລະນີທີ່ໄດ້ລະບຸໄວ້ໃນ ມາດຕາ 16 ຂໍ້ 02 ໄວ້ໃນໄລຍະ 03 ເດືອນ ກ່ອນສາມາດຂາຍຕໍ່ໄດ້;
9. ສະຫຼຸບ ລາຍງານ ການຈຳໜ່າຍ ແລະ ການຂຶ້ນທະບຽນ ໃຫ້ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;
10. ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ພັນທະຂອງຕົວແທນຈຳໜ່າຍ**

ຕົວແທນຈຳໜ່າຍມີພັນທະ ດັ່ງນີ້:

1. ຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ໃຊ້ບໍລິການ;
2. ຮັບຜິດຊອບຄວາມຖືກຕ້ອງ, ຄົບຖ້ວນ ແລະ ຮັກສາຄວາມລັບ ຂໍ້ມູນການຂຶ້ນທະບຽນ ຂອງ ຜູ້ໃຊ້ບໍລິການ;
3. ສະຫຼຸບ ລາຍງານ ການຈຳໜ່າຍ ແລະ ການຂຶ້ນທະບຽນ ໃຫ້ຜູ້ໃຫ້ບໍລິການ ຢ່າງເປັນປົກກະຕິ;
4. ສົ່ງຄືນເອກະສານຂຶ້ນທະບຽນໃຫ້ຜູ້ໃຊ້ບໍລິການ;
5. ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີພັນທະດັ່ງນີ້:

1. ຂຶ້ນທະບຽນເລກໝາຍໂທລະສັບຂອງຕົນໃຫ້ຖືກຕ້ອງ, ຄົບຖ້ວນ;
2. ຮັບຜິດຊອບຕໍ່ການນຳໃຊ້ເລກໝາຍໂທລະສັບຂອງຕົນ ຫຼື ອອກຊື່ຕົນ ຫຼື ຜູ້ທີ່ຕົນເອງຂຶ້ນທະບຽນແທນໃນກໍລະນີລູກຄົງ, ສະມະຊິກໃນຄອບຄົວ ແລະ ຜູ້ສູງອາຍຸ;
3. ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ຂໍ້ຫ້າມ ແລະ ມາດຕະການປັບໄໝ

**ມາດຕາ 22 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ນຳໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຂຶ້ນທະບຽນ;
2. ນຳໃຊ້ເລກໝາຍໂທລະສັບກໍ່ຄວາມວຸ້ນວາຍໃນສັງຄົມ ແລະ ສົ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
3. ມອບ, ໂອນເລກໝາຍໂທລະສັບຂອງຕົນທີ່ຂຶ້ນທະບຽນແລ້ວ ໃຫ້ບຸກຄົນອື່ນໂດຍບໍ່ຂຶ້ນທະບຽນຄືນໃໝ່;
4. ຮັບຂຶ້ນທະບຽນເລກໝາຍໂທລະສັບໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ກີດຂວາງ, ບໍ່ໃຫ້ການຮ່ວມມື ການປະຕິບັດວຽກງານຂຶ້ນທະບຽນ;
6. ນຳເຂົ້າ, ຈຳໜ່າຍ, ແຈກຢາຍ ແລະ ຜະລິດ ເລກໝາຍໂທລະສັບໂດຍບໍ່ຖືກຕ້ອງ;
7. ປອມແປງເອກະສານປະກອບການຂຶ້ນທະບຽນ.

**ມາດຕາ 23 ຂໍ້ຫ້າມສຳລັບຜູ້ຈຳໜ່າຍ**

ຫ້າມຜູ້ໃຫ້ບໍລິການ, ສາຂາຂອງຜູ້ໃຫ້ບໍລິການ ແລະ ຕົວແທນຈຳໜ່າຍມີພຶດຕິກຳດັ່ງນີ້:

1. ເປີດເຜີຍຂໍ້ມູນຂຶ້ນທະບຽນຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ ທີ່ຕົນໄດ້ຮັບອະນຸຍາດ ເປັນຕົວແທນ;
2. ມອບ, ໂອນ ລະຫັດນຳໃຊ້ຂຶ້ນທະບຽນໃຫ້ບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ ລະບົບຄຸ້ມຄອງເຄືອຂ່າຍຂອງຕົນ ເພື່ອປັບປຸງປ່ຽນແປງຂໍ້ມູນການຂຶ້ນທະບຽນ.

**ມາດຕາ 24 ມາດຕະການປັບໄໝ**

ຜູ້ໃຊ້ບໍລິການ, ຜູ້ໃຫ້ບໍລິການ ແລະ ຕົວແທນຈຳໜ່າຍເລກໝາຍໂທລະສັບ ຈະຖືກດຳເນີນການປັບໄໝ ໃນ 02 ກໍລະນີຄື: ນຳໃຊ້ເລກໝາຍໂທລະສັບບໍ່ຖືກຕ້ອງ ແລະ ຂຶ້ນທະບຽນເລກໝາຍໂທລະສັບບໍ່ຖືກຕ້ອງມີລາຍລະອຽດດັ່ງນີ້:

1. ກໍລະນີນຳໃຊ້ເລກໝາຍໂທລະສັບບໍ່ຖືກຕ້ອງປະກອບດ້ວຍ:

- ນຳໃຊ້ເລກໝາຍໂທລະສັບເຂົ້າໃນລະບົບທີ່ຕົນພັດທະນາຂຶ້ນຢ່າງຜິດກົດໝາຍ, ສ້າງຄວາມວຸ້ນວາຍຕໍ່ສັງຄົມ, ສ້າງການລົບກວນຕໍ່ລະບົບເຕັກນິກ, ສ້າງຜົນກະທົບຕໍ່ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈະຖືກປັບໄໝ 10.000.000 ກີບ/ເລກໝາຍ;
- ເປີດນຳໃຊ້ເລກໝາຍໂທລະສັບທີ່ບໍ່ໄດ້ຮັບການຂຶ້ນທະບຽນ ຈະຖືກປັບໄໝ 1.000.000 ກີບ/ເລກໝາຍ.

2. ກໍລະນີຂຶ້ນທະບຽນເລກໝາຍໂທລະສັບບໍ່ຖືກຕ້ອງ:

- ຂຶ້ນທະບຽນເລກໝາຍໂທລະສັບບໍ່ຖືກຕ້ອງຕາມລະບຽບການກຳນົດ ຈະຖືກປັບໄໝ 1.000.000 ກີບ/ເລກໝາຍ;
- ເປີດເຜີຍ, ປັບປຸງ ແລະ ລຶບລ້າງ ຂໍ້ມູນຂຶ້ນທະບຽນຂອງຜູ້ໃຊ້ບໍລິການ ຫຼື ບຸກຄົນອື່ນຢ່າງບໍ່ຖືກຕ້ອງ ຈະຖືກປັບໄໝ 3.000.000 ກີບ/ເລກໝາຍ;
- ນຳເຂົ້າ ເພື່ອແຈກຢາຍ, ຈຳໜ່າຍ ແລະ ຜະລິດ ເລກໝາຍໂທລະສັບບໍ່ຖືກຕ້ອງ ຈະຖືກປັບໄໝ 5.000.000 ກີບ/ເລກໝາຍ;
- ເປັນຕົວແທນຈຳໜ່າຍເລກໝາຍໂທລະສັບ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະຖືກປັບໄໝ 5.000.000 ກີບ/ຕົວແທນ;
- ມອບ, ໂອນ ລະຫັດນຳໃຊ້ຂຶ້ນທະບຽນໃຫ້ບຸກຄົນອື່ນໂດຍບໍ່ຖືກຕ້ອງ ຈະຖືກປັບໄໝ 5.000.000 ກີບ/ລະຫັດ.

## ໝວດທີ 7
## ການຕິດຕາມກວດກາການຂຶ້ນທະບຽນ

**ມາດຕາ 25 ຄະນະຮັບຜິດຊອບຕິດຕາມກວດກາ**

ຄະນະຮັບຜິດຊອບຕິດຕາມກວດກາການຂຶ້ນທະບຽນ ປະກອບມີ:

1. ຮອງລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຫົວໜ້າ;
2. ຕາງໜ້າອົງການດັດສົມໂທລະຄົມມະນາຄົມ ເປັນຮອງ;
3. ຕາງໜ້າ ສູນອິນເຕີເນັດແຫ່ງຊາດ ເປັນຄະນະ;
4. ຕາງໜ້າ ບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ເປັນຄະນະ.

**ມາດຕາ 26 ໜ້າທີ່ຂອງຄະນະຕິດຕາມກວດກາ**

ຕິດຕາມກວດກາການຈັດຕັ້ງປະຕິບັດ ການຂຶ້ນທະບຽນເພື່ອຮັບປະກັນວຽກງານ ການຂຶ້ນທະບຽນມີປະສິດທິພາບ ແລະ ດຳເນີນໄປຢ່າງເປັນປົກກະຕິ ໂດຍປະຕິບັດຕາມ 02 ຫຼັກການຄື: ກວດກາແບບປົກກະຕິ ແລະ ກວດກາແບບກະທັນຫັນ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການຄຸ້ມຄອງຂໍ້ມູນຂ່າວສານ ແລະ ການສື່ສານ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ